# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
### ວັນອາທິດ ທີ 6 ກໍຣະກະດາ 2008 ( 07-6-2008 )

---

## <u>ໃຜແທ້ເປັນຜູ້ປົກຄອງ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ພຣະນິມິດ 5:1-14)

**<u>ຄຳຖາມແຫ່ງຊີວິດ:</u>** ແມ່ນໃຜແທ້ທີ່ມີອຳນາດເໜືອເຫດການທັງປວງໃນໂລກ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຢຊູຄຣິດໄດ້ພິຊິດຄວາມຕາຍ, ພຣະອົງມີສິດອຳນາດ ພວກເຮົາທຸກຄົນທີ່ເຊື່ອ ແລະໄວ້ວາງໃຈໃນພຣະອົງກໍຈະມີຊັຍຊະນະເໝືອນກັນ.

**<u>ພົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານດຳເນີນຊີວິດດ້ວຍຄວາມໝັ້ນໃຈໂດຍ:

- ການຮຽນຮູ້ເຄັດລັບວ່າເປັນຫຍັງເຫການຕ່າງໆ ທີ່ເກີດຂຶ້ນຈຶ່ງບໍ່ມີຊັຍຊະນະເໜືອອົງພຣະເຢຊູຄຣິດໄດ້,ແລະ
- ຍັງຈະຊ່ອຍໃຫ້ພວກເຮົາມີພລັງທີ່ຈະຢືນໝັ້ນ ເປັນຂ້າໃຊ້ທີ່ສັດຊື່ບໍ່ວ່າຈະມີຫຍັງເກີດຂຶ້ນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ໃຫ້ນັກຮຽນເອົາໃຈໃສ່ຕໍ່ຄຳຖາມແຫ່ງຊີວິດຂອງອາທິດນີ້: ແມ່ນໃຜທີ່ມີໜ້າທີ່ຮັບຜິດຊອບຕໍ່ໜັງສືມ້ວນທີ່ແທ້ຈິງຂອງສິ່ງທັງໝົດທີ່ຈະເກີດຂຶ້ນໃນໂລກນີ້? (ໃຫ້ນັກຮຽນສົນທະນາກັນໃນເຣື່ອງນີ້)
- ຄຳຖາມ: ແມ່ນບັນຫາອັນໃດໃນຊີວິດຂອງທ່ານທີ່ຕ້ອງການມອບໃຫ້ພຣະເຢຊູຄອບຄອງ ແລະມີສິດທິ?

## 1. ເຝົ້າເບິ່ງພຣະເຢຊູ : (ພຣະນິມິດ 5:1-7)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ ພຣະນິມິດ 5:1-7
- ໝູນໃຈໃຫ້ນັກຮຽນຄິດເຖິງເຣື່ອງ " ໜັງສືມ້ວນ" ທີ່ເຮັດດ້ວຍໜັງເຄືອບໄມ້ມີເຊືອກຮ້ອຍຂນາດເທົ່າກັນກັບເຈັ້ຽ ມີຂອບເຄືອບດ້ວຍສີດຳ,ສີຄຳຊຶ່ງຫຸ້ມທໍ່ດ້ວຍແຜ່ນໂລຫະທີ່ດີ ຫລືທາດ້ວຍແວັກທີ່ເຮັດໃຫ້ເຫລື້ມໂອບເປັນຕາປະທັບໄວ້ຢ່າງດີ.
  ໃນນັ້ນໄດ້ບັນທຶກຄຳຖາມຫລາຍຢ່າງທີ່ກ່ຽວກັບເຣື່ອງທີ່ມີຄວາມໝາຍສຳຄັນກ່ຽວກັບຊີວິດ. ເຊັ່ນ: ພວກເຮົາຈະໄປໃສ? ໃນບົດຮຽນພຣະນິມິດບົດທີ 5 ກໍລວບລວມໄວ້ໃນໜັງສືມ້ວນນີ້ເຊັ່ນກັນ.
  (ຖ້າມີເວລາພໍ ໃຫ້ນັກຮຽນເຮັດໜັງສືມ້ວນເໝືອນດັ່ງພຣະຄັມພີບົດນີ້ກ່າວໄວ້, ຫລືສະແດງເປັນບົດລະຄອນກ້ອມໆ ເພື່ອໃຫ້ໄດ້ໃຈຄວາມໃນຄວາມໝາຍຕາມບົດຮຽນກໍຍິ່ງເປັນການດີ)
- ພຣະເຢຊູ, ດ້ວຍພຣະອົງເອງ ພຣະເຢຊູມີສິດເຮັດຫຍັງໄດ້ແດ່ໃນໜັງສືມ້ວນນັ້ນ.
- ແນະນຳໃຫ້ນັກຮຽນເຊື່ອໝັ້ນໃນສິດທິຂອງພຣະເຢຊູ ແລະປັກຕາໃຈເບິ່ງທີ່ພຣະອົງຕລອດເວລາໃນຊີວິດເພື່ອຈະໄດ້ຊີວິດນິຣັນ ແລະມີຊັຍຊະນະ.
- ທ່ານໂຢຮັນໃຊ້ແກຫັງ7 ເປັນເຄື່ອງໝາຍຂອງ 7 ຕາ ແລະ 7 ດວງວິນຍານ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 5:1-7)

1. ເວົ້າເຖິງສວັນແລ້ວ ຕອນໃດທີ່ທ່ານເຫັນພ້ອມ ແລະມີຄວາມຮູ້ສຶກໝັ້ນໃຈຫລາຍກວ່າໝູ່?
2. ໃຜຈະເປັນຜູ້ໄດ້ຮັບ "ສິດອຳນາດທູດສວັນ" ໃຜຈະເປັນຜູ້ມີສິດເປີດໜັງສືມ້ວນນັ້ນ ແລະໄຂຕຣາປະທັບອອກໄດ້?
3. ຄຳຖາມເຫລົ່ານີ້ມີຄວາມໝາຍສຳລັບທ່ານແນວໃດ?

## 2. ປົກຄອງຮ່ວມກັບພຣະເຢຊູ: (ພຣະນິມິດ 5:8-10)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 5:8-10
- ໃນກະດານໃຫ້ຂຽນ, ຄຳວ່າ ທ່ານເປັນຜູ້ມີສິດອຳນາດ, ແລ້ວໃຫ້ນັກຮຽນບອກຜູ້ທີ່ມີສິດອຳນາດ (ພຣະເຢຊູ)
- ຄຳຖາມ: ທ່ານໄດ້ຍອມຮັບວ່າພຣະເຢຊູຊົງເປັນຜູ້ຍິ່ງໃຫຍ່ ແລະມີອຳນາດເມື່ອໃດ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 5:8-10)

1. ຕາມທີ່ທ່ານໄດ້ວາດພາບເຫັນຂັນຄຳທີ່ເຕັມດ້ວຍຄຳອະທິຖານຂອງຄຣິສຕຽນ (ຂໍ້ທີ 8) ເຮັດແນວໃດເພື່ອໃຫ້ການອະທິຖານຂອງທ່ານຈະເຕັມຂັນດ້ວຍຄວາມອ່ອນຫວານເພື່ອຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າ?
2. ພຣະຄຳເຫລົ່ານີ້ໄດ້ເປີດເຜີຍເຣື່ອງຫຍັງຈະເຮັດຢ່າງນີ້ເພື່ອເປັນການໄຖ່ໂທດບາບໄປຕລອດບໍ່ ທຸກມື້ນີ້ພວກເຮົາຍັງເຮັດຢູ່ບໍ່?

## 3. ຕອບສນອງດ້ວຍການນະມັສການພຣະເຈົ້າ: (ພຣະນິມິດ 5:11-14)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະນິມິດ 5:11-14
- ຈັດຕຽມຄາດ ຫລືເຈັ້ຽເພື່ອນະມັສການ 8 ແຜ່ນມາ ແລ້ວຂຽນຄຳວ່າ: ພລັງອຳນາດ, ຮັ່ງມີ, ສະຕິປັນຍາ, ຄວາມເຂັ້ມແຂງ, ຄວາມໂຄຣົບ, ກຽດຕິຍົດ, ການອວຍພອນ ແລະການຄອບຄອງ.
- ໃຫ້ນັກຮຽນສເນີ 8 ຄຳຂອງການນະມັສການທີ່ສາມາດໃຫ້ການນະມັສການເປັນການດຳຣົງຊີວິດ. ເອົາຄາດ

ໃສ່ໃນກະຕ່າ ຫລືຈອກ. ແລ້ວໃຫ້ນັກຮຽນ 8 ຄົນຈົກເອົາຄາດມາຄົນລະໃບ ແລະເອົາໄປຕິດໃສ່ກະດານຕາມລໍາດັບຕໍ່ກັນຕາມຜູ້ທີນຶ່ງຮອດຜູ້ທີ 8 ໃສ່ກ້ອງຄໍາວ່າ ທ່ານເປັນຜູ້ຍິ່ງໃຫຍ່. ແລ້ວພ້ອມກັນເວົ້າວ່າ: ທ່ານເປັນຜູ້ທີ່ສົມຄວນໄດ້ຮັບສິດອໍານາດ (ຕໍ່ໄປເປັນການທົບທວນຂອງພຣະຄໍາ) ໃຫ້ນັກຮຽນເວົ້າເຖິງເຣື່ອງລັກສະນະນິສັຍ ຫລືການກະທໍາຂອງການດໍາເນີນຊີວິດຂອງບັນດາຜູ້ທີ່ເຊື່ອທີ່ຖືກຕາມຄໍາທີ່ຂຽນໄວ້ໃນຄາດເຫລົ່ານັ້ນວ່າເປັນແນວໃດແຕ່ລະຄົນ. ບາງຄົນອາດຈະຢູ່ກ້ອງຄາດທີ 1, ບາງຄົນກໍຢູ່ໃນກ້ອງຄາດທີ 2 ຫລື 3, 4..

- ໃນເວລາທີ່ດີສະດວກສະບາຍ ຫລື ໃນເວລາຫຍຸ້ງຍາກ ທ່ານຈະຕອບສນອງພຣະເຈົ້າຢ່າງໃດ?
- ພວກເຮົາທຸກຄົນໄດ້ມີປະສົບການພົບກັບການຮູ້ສຶກວ່າຕົນຢູ່ໃນທີ່ງຫຍ້າອັນໂດດດ່ຽວ ແລະສັດຕຣູກໍເຂົ້າມາລົບກວນຈິດໃຈຢູ່ເລື້ອຍໆ ມັນຈະເວົ້າວ່າ "ເບິ່ງແມ່ທ່ານກໍາລັງຢູ່ໂດດດ່ຽວ.
  ແລະພວກເຮົາກໍບໍ່ມີກໍາລັງທີ່ຈະເຮັດຫຍັງມີຮ້ອງໄຫ້ຕໍ່ພຣະເຈົ້າ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (5:11-14)

1. ການທີ່ໂຢຮັນໄດ້ບັນທຶກຫລາຍເຫດການຂອງການເວົ້າຫລື ເຄື່ອງໝາຍຕ່າງໆ ທີ່ຢູ່ຮອບພຣະບັນລັງຂອງພຣະເຈົ້ານັ້ນທ່ານມີຄວາມຄິດຢ່າງໃດ?
2. ທ່ານຈະຕອບສນອງໃຫ້ລະອຽດຕໍ່ສິ່ງເຫລົ່ານີ້ແນວໃດ?
3. ໃນການອະທິຖານຂອງທ່ານ, ທ່ານເຊື່ອວ່າພຣະເຈົ້າໄດ້ຍິນ ແລະຕອບທ່ານບໍ່?
4. ແມ່ນຫຍັງທີ່ທ່ານໄດ້ຕອບສນອງພຣະເຈົ້າ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ພຣະເຢຊູຄຣິດເຈົ້າເທົ່ານັ້ນທີ່ມີສິດ ແລະສົມຄວນທີ່ເປັນຜູ້ເປີດແຜນການຂອງພຣະເຈົ້າໃຫ້ແກ່ໂລກ.
- ບັນດາຜູ້ທີ່ເຊື່ອຢູ່ໃນແຜ່ນດິນນີ້ເຂົາເຈົ້າໄດ້ຢູ່ໃກ້ບັນລັງຣາຊອານາຈັກສວັນໃນເມື່ອເຂົາອະທິຖານແລ້ວກໍຈະໄດ້ຮັບຄວາມອົບອຸ່ນ ສະບາຍໃຈ.
- ຜູ້ທີ່ເຊື່ອທັງຫລາຍໄດ້ໝັ້ນໃຈໃນການປະກາດຂ່າວປະເສີດ, ໃນການຮູ້ຈັກການວາຍພຣະຊົນຂອງພຣະຄຣິດນັ້ນເພື່ອຄົນທັງໝົດໃນໂລກ.
- ເພາະວ່າອໍານາດການປົກຄອງຂອງພຣະຄຣິດ, ຜູ້ທີ່ຕິດຕາມພຣະອົງໄດ້ຖວາຍຕົວຮັບໃຊ້ໃຫ້ເປັນຕົວແທນຂອງພຣະອົງແລ້ວພຣະອົງຈະແກ້ໄຂທຸກບັນຫາທີ່ເຂົາເຈົ້າປະເຊີນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH